**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ 0621

ຫ້ອງການກະຊວງ ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 16 FEB 2024

# ແຈ້ງການ

ເຖິງ: ທ່ານຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງວຽງຈັນ.

ເລື່ອງ: ການປະກາດລົງທະບຽນຮັບສະໝັກແຮງງານ ເມືອງຊະນະຄາມ, ແຂວງວຽງຈັນ.

- ອີງຕາມ ໜັງສືສະເໜີລົງເປີດຮັບເອົາແຮງງານໄປເຮັດວຽກລະດູການ ຈາກ ບໍລິສັດ ສະຫວັນບໍລິການຈັດຫາງານ ຈຳກັດ ສະບັບລົງວັນທີ 027/SV, ລົງວັນທີ 14 ກຸມພາ 2024 .

ຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເມືອງໂກຮົງ, ແຂວງແຈວລານຳ, ສ. ເກົາຫຼີ ໄດ້ສະແດງເຈດຈຳນົງ ໃນການນຳໃຊ້ແຮງງານລາວ ຈຳນວນ **100** ຄົນ, ຍິງ **15** ຄົນ ເພື່ອໄປເຮັດວຽກຕາມລະດູການ ຢູ່ເມືອງດັ່ງກ່າວ ປະຈຳຢູ່ສວນໝາກເດັ່ນ, ໝາກຄາຍ, ສະຕໍເບີຣີ້, ໝາກອະງຸ່ນແລະ ຜັກສະລັດ ໃນຕົ້ນເດືອນ **ເມສາ 2024.** ສະນັ້ນ, ເພື່ອເປັນການກະກຽມຄວາມພ້ອມ ແລະ ຮັບປະກັນໃຫ້ແກ່ການຄັດເລືອກແຮງງານທີ່ມີຄຸນະພາບ ແລະ ຖືກຕ້ອງຕາມຈຸດປະສົງຂອງນາຍຈ້າງ, ຫ້ອງການ ກະຊວງ ຮສສ ແຈ້ງມາຍັງທ່ານ ເພື່ອປະສານຫາຫ້ອງການ ຮສສ ເມືອງຊະນະຄາມ ໃຫ້ແຈ້ງໄປຍັງແຮງງານທີ່ມີຄວາມສົນໃຈຈາກບ້ານຕ່າງໆພາຍໃນເມືອງຊະນະຄາມ ມາຂຶ້ນທະບຽນເພື່ອກະກຽມການສຳພາດ ໃຫ້ໄດ້ຢ່າງນ້ອຍ ຈຳນວນ 120 ຄົນ, ຍິງ 30 ຄົນ ແລະ ເພື່ອເຮັດໃຫ້ຂະບວນການຮັບສະໝັກ ແລະ ຄັດເລືອກເອົາແຮງງານ ມີຄວາມສະດວກ, ໂປ່ງໃສ ແລະ ຖືກຕ້ອງຕາມລະບຽບການທີ່ໄດ້ກຳນົດໄວ້, ຫຼີກລ້ຽງບໍ່ໃຫ້ມີນາຍໜ້າ ເຂົ້າມາມີສ່ວນຮ່ວມໃນຂະບວນການຄັດເລືອກແຮງງານຄັ້ງນີ້ຢ່າງເດັດຂາດ ຂໍໃຫ້ພະແນກແຕ່ງຕັ້ງພະນັກງານເພື່ອເຂົ້າຮ່ວມໃນການຕິດຕາມ ແລະ ໃຫ້ຂໍ້ມູນທີ່ຖືກຕ້ອງແກ່ແຮງງານກ່ອນການຄັດເລືອກ.

ສຳລັບວັນເວລາໃນການສຳພາດ ແລະ ຄັດເລືອກແຮງງານແມ່ນວັນທີ **21 ກຸມພາ 2024** ເວລາ **08:00-16:00** ແລະ ແບບຟອມການສະໝັກ ກົມການຈັດຫາງານ ຈະກະກຽມໄປແຈກຈ່າຍໃນມື້ລົງທະບຽນ ແລະ ສຳລັບຄ່າລົງທະບຽນ, ຄ່າສະໝັກ ແລະ ຄັດເລືອກ ແມ່ນຈະບໍ່ໄດ້ເສຍຄ່າໃຊ້ຈ່າຍ.

**ເງື່ອນໄຂການສະໝັກ**

1. ເປັນພົນເມືອງລາວ ແລະ ອາໄສຢູ່ເມືອງຊະນະຄາມ ຢ່າງໜ້ອຍ 1 ປີ;
2. ເພດຊາຍ ແລະ ຍິງ ອາຍຸ 25-45 ປີ; (ສຳລັບເພດຍິງ ແມ່ນບໍ່ຢູ່ໃນໄລຍະຖືພາ ແລະ ບໍ່ມີລູກນ້ອຍຕ່ຳກວ່າ 1 ປີ);
3. ເປັນຜູ້ທີ່ປະກອບອາຊີບ ໃນຂະແໜງກະສິກຳ ເຊັ່ນ: ເຮັດໄຮ່, ເຮັດນາ, ເຮັດສວນ ເປັນພື້ນຖານ ໃນການດຳລົງຊີວິດ;

4. ມີສຸຂະພາບແຂງແຮງ, ຕາບໍ່ບອດສີ, ບໍ່ເປັນໂລກຕ້ອງຫ້າມ ເປັນຕົ້ນ: ໄວຣັດຕັບບີ, ພະຍາດຕິດຕໍ່ (ວັນນະໂລກ, ໂຄວິດ-19, ປອດແຫ້ງ) ແລະ ພະຍາດຕິດຕໍ່ທາງເພດສຳພັນ (ຊີຟີລີສ), ຜູ້ທີ່ໃຊ້ຢາເສບຕິດ;
5. ບໍ່ມີຄະດີ, ບໍ່ມີປະຫວັດຫ້າມເຂົ້າ-ອອກ ສ.ເກົາຫຼີ ຫຼື ບໍ່ຖືກຈຳກັດການເດີນທາງອອກນອກປະເທດ;
6. ລວງສູງ 155 ຊັງຕີແມັດຂຶ້ນໄປ;
7. ຈົບການສຶກສາຂັ້ນປະຖົມສຶກສາຂຶ້ນໄປ ສາມາດອ່ານ, ຂຽນ ພາສາລາວໄດ້;
8. ສາມາດຊຳລະຄ່າໃຊ້ຈ່າຍຕ່າງໆດ້ວຍຕົນເອງ;
9. ຕ້ອງມີໂທລະສັບ ສະມາດໂຟນ ເພື່ອໃຊ້ລົງທະບຽນຢູ່ ສ.ເກົາຫຼີ.

ເອກະສານປະກອບ

ໃນເວລາ ມາສຳພາດຄັດເລືອກແຮງງານ ໃຫ້ແຮງງານຖືເອກະສານຈຳເປັນມາພ້ອມ ດັ່ງນີ້:

1. ຮູບຂະໜາດ 3 x 4 ພື້ນຂາວ ຈຳນວນ 6 ໃບ;
2. ຮູບຂະໜາດ 3,5*4,5 ພື້ນຂາວ ຈຳນວນ 6 ໃບ;
3. ກອບປີ້ ສຳມະໂນຄົວ 3 ສະບັບ;
4. ກອບປີ້ບັດປະຈຳຕົວ 3 ສະບັບ;
5. ກອບປີ້ພາດສປອດ 3 ສະບັບ (ຖ້າບໍ່ມີໃຫ້ໄປດຳເນີນການ ພາຍຫຼັງທີ່ໄດ້ຮັບການຄັດເລືອກ);
6. ໃບຢັ້ງຢືນທີ່ຢູ່ຈາກນາຍບ້ານທີ່ຕົນເອງອາໄສຢູ່;
7. ສຳເນົາໃບຕາດິນຂອບທອງ (ທີ່ຈະນຳໃຊ້ໃນການຄ້ຳປະກັນ).

❖ ໝາຍເຫດ:

ເນື່ອງຈາກເວລາໃນການຮັບສະໝັກ, ສຳພາດ ແລະ ຄັດເລືອກ ສັ້ນ, ແຮງງານຜູ້ທີ່ຄົບເງື່ອນໄຂ ແລະ ມີໜັງສືຜ່ານແດນ ຈະໄດ້ຮັບການພິຈາລະນາພິເສດ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດດ້ວຍ.

**ຫົວໜ້າຫ້ອງການ**

**ເບີຕິດຕໍ່ປະສານງານ:**
**ສຸກາຊີ ຫຼວງວິເສດ 021 217738**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ

ບຸນຍອດ ຈັນທະວອນ